# ຈົດໝາຍເລື້ອງການເຂົ້າຮ່ວມ ການສຶກສາພິເສດ ດ້ານສາສນາ ແລະ ການສຶກສາພິເສດ ດ້ານຈັນຍາບັນ

ຈຸດເດັ່ນຂອງລະບົບການສຶກສາຂອງຫຼວງໃນຣັດ NSW ນີ້ແມ່ນໂອກາດ ໃນການ ໃຫ້ເວລາຢູ່ໃນຫ້ອງຮຽນໃນການຮຽນເລື້ອງຈັນຍາບັນ, ຄວາມສັດທາເຊື່ອຖື ແລະ ສິນທັມຈາກສາສນາ ຫຼື ບໍ່ແມ່ນຈາກສາສນາ ຕາມທັດສະນະ ການເລືອກຂອງ ບັນດາພໍ່ແມ່.

ເວັບໄຊຕ໌ຂອງໂຮງຮຽນ (ລິງກ໌ທີ່ສະແດງໃຫ້ເຫັນຢູ່ຂ້າງລຸ່ມ) ໃຫ້ຂໍ້ມູນກ່ຽວກັບທາງເລືອກຕ່າງໆເຫຼົ່ານີ້ເພື່ອຊ່ວຍອູ້ມຊູການເລືອກຂອງພໍ່ແມ່/ຜູ້ດູແລ.

---

ລິງກ໌ຂອງເວັບໄຊຕ໌ຂອງໂຮງຮຽນ

ພໍ່ແມ່/ຜູ້ດູແລສາມາດແຈ້ງໃຫ້ທາງໂຮງຮຽນຊາບໄດ້ທຸກເວລາໂດຍເປັນ ລາຍລັກອັກ ສອນວ່າພວກເຂົາຕ້ອງການປ່ຽນການຕັດສິນໃຈຂອງພວກເຂົາ. ບັນດານັກຮຽນຈະສືບຕໍ່ຮຽນແບບເກົ່າຕາມທີ່ໄດ້ຈັດໄວ້ໃຫ້ ໃນປີທີ່ຜ່ານມາ ນອກເສັຍ ຈາກວ່າພໍ່ແມ່/ຜູ້ ດູແລໄດ້ຂໍຮ້ອງໃຫ້ມີການປ່ຽນແປງເປັນລາຍລັກອັກສອນ

ຖ້າທາງເລືອກ ການສຶກສາພິເສດ ດ້ານສາສນາ (Special Religious Education (SRE)) ຫຼື ການສຶກສາພິເສດ ດ້ານຈັນຍາບັນ (Special Education in Ethics (SEE)) ທີ່ທ່ານມັກ ບໍ່ມີໄວ້ໃຫ້ ກະຣຸນາຕິດຕໍ່ຫາຜູ້ໃຫ້ບໍຣິການທີ່ໄດ້ຖືກຮັບຮອງ. ບັນດານັກຮຽນທີ່ບໍ່ເຂົ້າຮຽນຢູ່ໃນຫ້ອງຮຽນ ການສຶກສາພິເສດ ດ້ານສາສນາ ຫຼື ການສຶກສາພິເສດ ດ້ານຈັນຍາບັນ ກໍຈະມີກິຈກັມ ອື່ນໆທີ່ມີການຄວບຄຸມ ແລະ ມີຄວາມໝາຍແທນ.

ເພື່ອເອົາຂໍ້ມູນເພີ້ມຕື່ມກ່ຽວກັບການສຶກສາພິເສດດ້ານສາສນາ ແລະ ການສຶກສາພິເສດດ້ານຈັນຍາບັນ ຮວມທັງບັນຊີລາຍຊື່ຂອງບັນດາຜູ້ໃຫ້ບໍຣິການທີ່ໄດ້ຖືກຮັບຮອງ ຈົ່ງເປີດເຂົ້າເບິ່ງ: [ສາສນາ ແລະ ຈັນຍາບັນ]

---

ຊື່ໂຮງຮຽນ

ທາງເລືອກຕ່າງໆທີ່ຢູ່ຕໍ່ລົງໄປນີ້ມີໄວ້ໃຫ້ຢູ່ທີ່ໂຮງຮຽນທີ່ມີຊື່ຢູ່ຂ້າງເທິງນີ້. ກະລຸນາເລືອກເອົາຢ່າງດຽວຖ້າທ່ານຕ້ອງການໃຫ້ລູກທ່ານເຂົ້າຮຽນ SRE ແລະ ໝາຍຕິ໊ກໃສ່ໃນປ່ອງຂ້າງໆທາງເລືອກຂອງທ່ານ.

## ທາງເລືອກ SRE (SRE Options)

☐ ທາງເລືອກທີ 1 ______________________

☐ ທາງເລືອກທີ 2 ______________________

☐ ທາງເລືອກທີ 3 ______________________

☐ ທາງເລືອກທີ 4 ______________________

☐ ທາງເລືອກທີ 5 ______________________

☐ ທາງເລືອກທີ 6 ______________________

☐ ທາງເລືອກທີ 7 ______________________

ຫຼື

☐ ກະລຸນາ ໝາຍຕິ໊ກໃສ່ໃນປ່ອງນີ້ຖ້າທ່ານບໍ່ຕ້ອງການໃຫ້ລູກທ່ານເຂົ້າຮຽນ SRE.
(Student will not participate in SRE)

**ກະລຸນາຂຽນຕື່ມແບບຟອມທີ່ຢູ່ຂ້າງລຸ່ມນີ້ເປັນພາສາອັງກິດ ເຊັນຊື່ ແລ້ວສົ່ງກັບຄືນໄປໃຫ້ໂຮງຮຽນ.**

ຊື່ນັກຮຽນ ______________________________ ປີຮຽນ ______________
Student name | Year

ລາຍເຊັນພໍ່ແມ່/ຜູ້ດູແລ ______________________________ ວັນທີ ______________
Signature of parent/carer | Date

## ບໍຣິການ ນາຍພາສາທາງໂທຣະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ້ມຕື່ມ ແລະ ຕ້ອງການນາຍພາສາ, ກະຣຸນາໂທຫາ ບໍຣິການນາຍພາສາ ທາງໂທຣະສັບຕາມໝາຍເລກ 131 450 ແລະ ຂໍເອົານາຍພາສາລາວ. ໃຫ້ບອກຜູ້ຮັບສາຍ ໝາຍເລກໂທຣະສັບທີ່ທ່ານຕ້ອງການໂທຫາ ແລ້ວ ຜູ້ຮັບສາຍກໍຈະຊອກເອົານາຍພາສາຕາມສາຍເພື່ອ ຊ່ວຍທ່ານ ໃນການໂອ້ລົມນັ້ນ. ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.

ຖ້າທ່ານເລືອກເອົາການສຶກສາພິເສດດ້ານສາສນາ ຫຼື ການສຶກສາພິເສດດ້ານຈັນຍາບັນ, ທ່ານຢືນຢັນວ່າ, ໃນການເຮັດດັ່ງກ່າວ, ທ່ານຍິນຍອມໃຫ້ທາງກະຊວງເອົາຊື່ລູກຂອງທ່ານໃຫ້ກັບຜູ້ໃຫ້ບໍລິການທີ່ໄດ້ຮັບການ ແຕ່ງຕັ້ງ. ກະຊວງຕ້ອງໄດ້ຮັບການຍິນຍອມເຫັນດີຈາກທ່ານພາຍໃຕ້ມາດຕາ 26 ຂອງກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ ແລະ ການປົກປ້ອງຂໍ້ມູນສ່ວນຕົວ ປີ1998 (NSW) ເພື່ອຈະບໍ່ຕ້ອງປະຕິບັດຕາມມາດຕາ 19, ເຊິ່ງມີຜົນບັງຄັບໃຊ້ເພື່ອປ້ອງກັນບໍ່ໃຫ້ກະຊວງແຈ້ງຊື່ລູກຂອງທ່ານ.